# ຕົ້ນກຳເນີດຂອງເຂົ້າ

## ຕາມທີ່ແມ່ຕູ້ຂ້ອຍເລົ່າສູ່ຂ້ອຍຟັງ

ໂດຍ ສີສະຫລຽວ ສະແຫວງສຶກສາ



# L'origine du riz

## telle qu'elle me fut contée par ma grand'mère

par Sisaliao Svèngsuksa

# ຕົ້ນກຳເນີດຂອງເຂົ້າ

## ຕາມທີ່ແມ່ຕູ້ຂ້ອຍເລົ່າສູ່ຂ້ອຍຟັງ

ໂດຍ ສີສະຫລຽວ ສະແຫວງສຶກສາ



# L’origine du riz

## telle qu’elle me fut contée par ma grand’mère

**par Sisaliao Svèngsuksa**

# ຄຳນຳ

ຢູ່ປະເທດລາວກໍຄືຢູ່ແຫ່ງຕ່າງໆໃນທະວີບອາຊີ, ວັດຕະຈັກແຫ່ງການຜະລິດເຂົ້າ ອັນມີບຸນແລະງານຕ່າງໆເປັນສ່ວນປະກອບ ມີຜົນກະທົບຢ່າງເລິກເຊິ່ງຕໍ່ວິຖີຊີວິດຂອງປະຊາກອນ ໄດ້ຫລາຍ ສະຕະວັດມາແລ້ວ. ການຈັດຕັ້ງສັງຄົມທີ່ຕິດພັນກັບການປູກເຂົ້າ (ເຊັ່ນການຈັດຕັ້ງເພື່ອຄຸ້ມຄອງ ລະບົບຊົນລະປະທານໃນເຂດທີ່ເຮັດນາ ແລະການຈັດຕັ້ງເພື່ອຈັດສັນພື້ນທີ່ ສຳລັບເຂດເຮັດໄຮ່ເຄື່ອນຍ້າຍ), ໄດ້ສະແດງອອກໃນຈິນຕະນາການ ແລະ ພຶດຕິກຳຂອງປະຊາກອນເຫລົ່ານັ້ນ.

ສະເພາະຢູ່ປະເທດລາວ, ເຂົ້າບໍ່ເປັນພຽງແຕ່ມິຕິຫນຶ່ງຂອງພືດ ໃນຕະກູນຫຍ້າ ຫລື ມິຕິຂອງເຍື່ອງອາຫານ ຫລື ມິຕິຫນຶ່ງຂອງອາຫານຕົ້ນຕໍເທົ່ານັ້ນ, ແຕ່ມັນຫາກແມ່ນຈຸດໃຈກາງທີ່ເປັນ ແຫລ່ງກຳເນີດແຫ່ງຫນຶ່ງ ຂອງຮີດຄອງປະເພນີ. ນິທານປະເພດອະພິນິທານ ທີ່ມີຕົ້ນກຳເນີດມາຈາກເຂົ້າ ໄດ້ຝັງຢູ່ໃນສ່ວນເລິກຂອງຈິດວິນຍານຂອງຊາວລາວ.

ຕຳນານທີ່ມີຄວາມຫມາຍສຸດເລິກເຊິ່ງທີ່ມີຊື່ວ່າ: " ຕົ້ນກຳເນີດຂອງເຂົ້າ ຕາມທີ່ແມ່ຕູ້ຂ້ອຍເລົ່າສູ່ຂ້ອຍຟັງ " ແລະ ທີ່ ທ່ານ ສີສະຫລຽວ ສະແຫວງສຶກສາ ຮຽບຮຽງຂຶ້ນມານີ້ ແມ່ນສ່ວນຫນຶ່ງຂອງ ຄັງສາງວັນນະຄະດີປາກເປົ່າທີ່ເລົ່າສືບທອດກັນມາ ຂອງຊາວລາວ. ສູນວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດປະເທດຝຣັ່ງປະຈຳ ສປປລາວ ຮູ້ສຶກພາກພູມໃຈທີ່ໄດ້ມີສ່ວນ ປະກອບເຂົ້າໃນການຈັດພິມ ເພື່ອເອື້ອອຳນວຍໃຫ້ຕຳນານສະບັບນີ້ ເຂົ້າເຖິງມະຫາຊົນ ຢ່າງກວ້າງຂວາງ.

*ຊັງ ອັງເດຣ ເວຽລາ*

ຜູ້ອຳນວຍການສູນວັດທະນະທຳ

ແລະການຮ່ວມມືດ້ານພາສາສາດຂອງປະເທດຝຣັ່ງປະຈຳ ສ.ປ.ປ.ລາວ.

# PREFACE

Au Laos comme dans toute l'Asie, le cycle de production du riz, accompagné de fêtes et de cérémonies, rythme la vie des populations depuis des siècles. L'organisation sociale que la culture du riz implique (gestion commune des systèmes d'irrigation pour les rizières inondées, ou semi-nomadisme des cultures sur brûlis du riz pluvial) a marqué profondément les mentalités et les comportements.

Ne pouvant être réduit à sa dimension botanique de graminée, ni à celle, culinaire, d'aliment de base, le riz est le pivot autour duquel s'organise la vie traditionnelle, et les mythes qu'il véhicule sont ancrés au plus profond de l'âme lao.

Cette touchante légende sur l'origine du riz que nous restitue le Dr Sisaliao Svengsuksa est un trésor de la littérature orale laotienne et le Centre de langue française (CCCL) est heureux de pouvoir s'associer à cette publication qui permet de le mettre à la portée du plus grand nombre.

*Jean-André VIALA,*

directeur-adjoint du Centre de langue française en RDP Lao

ແມ່ຕູ້ຂອງຂ້ອຍ ເປັນບຸກຄົນທີ່ມີອິດທິພົນຕໍ່ຂ້ອຍທີ່ສຸດ. ລາວມີຄວາມສະຫລາດແຫລມຄົມ ເຫລືອທີ່ຈະພັນລະນາໄດ້. ບາງຄັ້ງຂ້ອຍຈົນຫລົງຄິດວ່າ ລາວສະຫລາດກວ່າຄູປະຈຳຫ້ອງຂອງຂ້ອຍອີກ. ຄວາມຮູ້ຂອງລາວກວ້າງຂວາງ ຢ່າງບໍ່ມີຂອບເຂດ. ລາວຕອບຂໍ້ຂ້ອງໃຈຂອງຂ້ອຍ ຢ່າງບໍ່ຂ້ອງບໍ່ຄາຈັກເທື່ອ.

ຂ້ອຍຍັງຈື່ ເລື່ອງທີ່ລາວເລົ່າສູ່ຂ້ອຍຟັງຫວ່າງຫລາຍປີກ່ອນໜ້ານີ້ໄດ້ ເປັນຢ່າງດີ. ມື້ນັ້ນ ຂ້ອຍຖາມລາວວ່າ: " ແມ່ຕູ້, ເປັນຫຍັງແມ່ຕູ້ຄືວ່າເອົາໃຈໃສ່ລູບໆຄຳໆ ຫວດເຂົ້າເອົາແທ້ເອົາວ່າ ? " ລາວຕອບຂ້ອຍທັນທີ່ໂລດວ່າ: " ເຂົ້າ ບໍ່ແມ່ນຂອງກິນທຳມະດາສາມັນໄດ໋ຫລານເອີຍ. ມັນມາແຕ່ເທິງຟ້າພຸ້ນໄດ໋. ພະຍາແຖນໄດ໋ເປັນຜູ່ສົ່ງລົງມາ ເພື່ອໃຫ້ມະນຸດເຮົາ ອິ່ມໜຳສຳລານ !



Ma grand' mère était une presonne qui avait une grande influence sur moi. Elle était d'une intelligence vive, et je dirais même que son intelligence surpassait celle de mon instituteur. Ses connaissances étaient très vastes et elle avait réponse à toutes mes questions.

Je me souviens encore très bien de ce qu'elle m'a raconté, quand, un jour, je lui ai demandé:

- Grand' mère, pourquoi fais-tu cuire le riz avec tant d'amour ? Elle me répondit immédiatement:

- Le riz n'est pas un aliment ordinaire. Il vient du ciel. C'est Phagna Thène qui l'a livré aux hommes, pour leur bien-être.

ແລ້ວ ລາວກໍ່ ເລົ່ານິທານ ເລື່ອງຕົ້ນກຳເນີດຂອງເຂົ້າ ສູ່ຂ້ອຍຟັງ.

"ແຕ່ກ່ອນ, ແຕ່ກີ້, ແຕ່ສະໄໝທີ່ແຜ່ນດິນກັບແຜ່ນຟ້າຍັງຈອດກັນພຸ້ນ. ໃນສະໄໝນັ້ນຄົນ ແລະສັດຢູ່ຮ່ວມກັນໂດຍສັນຕິ. ໃນສະໄໝນັ້ນ ອາຫານປະເພດເມັດບໍ່ທັນມີເທື່ອ, ແຕ່ທຸກຊີວິດມີແຕ່ຄວາມສຸກ. ທຳມະຊາດອັນດຸດົມສົມບູນ ສາມາດຕອບສະໜອງທຸກສິ່ງທຸກຢ່າງ ໃຫ້ແກ່ການດຳລົງຊີວິດຂອງຄົນ ແລະສັດ ໄດ້ເປັນຢ່າງດີ.



Puis, elle me conta ce récit relatant les origines du riz :

- Cela remonte à l'époque où le ciel et la terre se rejoignaient, où les hommes et les animaux vivaient en bon voisinage et où les graines nourricières n'existaient pas.Cependant, la vie était douce et la nature était généreuse, prolifération d'espèces humaine et animales.

ມາຮອດມື້ຫນຶ່ງ ຊຶ່ງແມ່ນມື້ທີ່ເປັນຍິດຫມາຍແຫ່ງ " ກາລີຍຸກ " ອັນເນື່ອງມາຈາກຄວາມແຫ້ງແລ້ງ ທີ່ແກ່ຍາວບໍ່ມີວັນສິ້ນສຸດເປັນ. ຄວາມແຫ້ງແລ້ງດັ່ງກ່າວ ມີຄວາມຮຸນແຮງທີ່ສຸດ ຈົນເຮັດໃຫ້ເຜືອກ, ມັນ, ພືດຜັກທັງຫລາຍທີ່ເປັນອາຫານຂອງຄົນ ບໍ່ສາມາດເກີດຂຶ້ນໄດ້. ຜູ່ຄົນທັງຫລາຍລໍກ້າແຕ່ມື້ກໍາມະຈຸລາດມາເຖິງ.



Et ce, jusqu'au jour où survint l'apocalypse marquée par une longue sécheresse. Cette sécheresse était telle que ni igname, ni taro, ni aucune autre plante nourrissant l'espèce humaine ne parvenaient plus à pousser. Le désastre était imminent.

ເມື່ອເຫັນພົງພັນຂອງມວນມະນຸດ ກໍາລັງບາບຢູ່ຄືແນວນັ້ນ, ກະແສແນວຄິດຄວາມສາມັກຄີ ຈຶ່ງໄດ້ອຸບັດຂຶ້ນນໍາຝູງສັດທັງປວງ. ດັ່ງນັ້ນ ຝູງສັດທັງປວງ ຈຶ່ງໄດ້ຕີຄ້ອງຮ້ອງປ່າວ ບອກຂ່າວການນັດປະຊຸມ ເພື່ອຮ່ວມກັນປຶກສາຫາລືຊອກຫາວິທີທາງຊ່ອຍເພື່ອນຮ່ວມແຜ່ນດິນ ໃຫ້ຫລຸດພົ້ນອອກຈາກອັນຕະລາຍແຫ່ງການວອດວາຍ. ສັດທີ່ເຂົ້າຮ່ວມກອງປະຊຸມມີທຸກປະເພດ ນັບແຕ່ແມງໄມ້ນ້ອຍ ຈົນເຖິງສັດໃຫຍ່ເຊັ່ນ: ລີງ, ເສືອ, ສິງ, ຊ້າງ... ມະຕິກອງປະຊຸມແມ່ນ:
" ຕ້ອງຍົກທັບຂຶ້ນໄປເທິງຟ້າ ເພື່ອລົງໂທດພະຍາແຖນ.



La menace d'extinction de l'espèce humaine appela tous les animaux à la solidarité. Ces derniers convoquèrent un conseil auquel tous participèrent, des plus petits insectes jusqu'aux éléphants, en passant par les primates et les félins, afin de décider en commun les actions à entreprendre pour sauver du danger les habitants se partageant la même planète terre. Ainsi fut décidée une expédition punitive chez Phagna Thène dans le ciel.

ດ້ວຍເຫດວ່າ ພະຍາແຖນ ເປັນຜູ່ຕັດສິນຊະຕາກຳຂອງທຸກຊີວິດຢູ່ເທິງແຜ່ນດິນ, ຫມາຍຄວາມວ່າ ຄວາມສຸກ ແລະຄວາມທຸກຂອງທຸກຊີວິດຢູ່ເທິງແຜ່ນດິນ ຂຶ້ນນຳອາລົມຂອງພະຍາແຖນ. ຄວາມແຫ້ງແລ້ງທີ່ກຳລັງຄຸກຄາມຢູ່ເທິງແຜ່ນດິນນີ້ ກໍແມ່ນພະຍາແຖນຢາກໃຫ້ມັນເປັນຄືແນວນັ້ນ.




Phagna Thène était en effet, le Tout Puissant qui détenait tous pouvoirs sur toutes les formes de vie sur terre et, selon ses humeurs, il faisait le bonheur ou le malheur des êtres. Cette longue sécheresse était justement le fait de la mauvaise volonté de Phagna Thène.

ການກະກຽມອອກເດີນທາງຂຶ້ນໄປເທິງຟ້າ ໄດ້ເປັນຂະບວນຟົດຟື້ນ ແລະສຳເລັດລົງຢ່າງຮີບຮ້ອນ. ແຕ່ກ່ອນຈະອອກເດີນທາງຊ້ຳພັດຍັງຂາດຜູ່ບັນຊາ. ດັ່ງນັ້ນ ຈຶ່ງໄດ້ເປີດກອງປະຊຸມອີກເທື່ອໜຶ່ງ. ມະຕິຂອງກອງປະຊຸມໃນຄັ້ງນີ້ ແມ່ນ " ຜູ້ທີ່ຈະເປັນຜູ້ບັນຊາສູງສຸດ ແມ່ນຜູ້ທີ່ຂ້າມຫ້ວຍໄປຮອດຟາກໃນກ່ອນໝູ່ ". ແລ້ວສັດທຸກໂຕກໍຟ້າວແລ່ນໄປເລືອກບ່ອນຢູ່ແຄມຫ້ວຍ. ມີແຕ່ທ້າວຄັນຄາກຜູ້ດຽວທີ່ບໍ່ຟ້າວຟັ່ງ, ພຽງແຕ່ເຕັ້ນກະແຢບ, ກະແຢບ ໄປຫາກົ້ນຂອງເສືອ.



L'expédition se prépara activement et tout fut rapidement prêt. Mais avant le déploiement, il fallait lui trouver un chef. Pour ce, un nouveau conseil se tint et la règle suivante fut édictée:

- Sera chef de l'expédition, quiconque arrivera le premier sur l'autre rive de la rivière. Tous se précipitèrent pour avoir une bonne place sur le bord de la rivière; tous sauf un, le crapaud, qui fit ses petits bonds vers le derrière du tigre.

ເມື່ອສຽງສັນຍານດັງຂຶ້ນ ທ້າວຄັນຄາກກໍຟ້າວໂດດຄາບຫາງເສືອ (ເພາະຄັນຄາກຮູ້ດີວ່າທຸກເທື່ອ ກ່ອນທີ່ເສືອຈະເຕັ້ນ ມັນຊັນຫາງມັນຂຶ້ນ ແລ້ວຊິດໄປທາງໜ້າຢ່າງແຮງ) ແລ້ວເສືອກໍແກ່ວງມັນແບບ ແກ່ວງທ່ວງໄປຕົກຢູ່ຟາກຂອງຫ້ວຍກົງກັນຂ້າມ.

ເມື່ອຝູງສັດທັງປວງຂ້າມໄປເຖິງຟາກໃນ ພວກເຂົາກໍເຫັນທ້າວຄັນຄາກນັ່ງເສີຍມ່ວງຢູ່.



Dès que le signal fut donné, le crapaud qui savait par experience qu'avant de sauter, le tigre balance toujours fortement la queue vers l'avant, sauta sur le tigre et lui mordit la queue qui, d'un seul mouvement, le propulsa directement sur l'autre rive.
Quand la foule y arriva, le crapaud était déjà là, tranquille.

- ອ້າວ ! ບັກຄັນຄາກມຶງ ມາຮອດຕົນປານໃດແລ້ວ ? ຊ້າງຖາມດ້ວຍຄວາມແປກປະຫລາດ.
- ບໍ່ດົນປານໃດ ! ຫາກໍກິນເສືອຫມົດໂຕດຽວ. ຄັນຄາກເວົ້າພ້ອມທັງຍິ້ມທ້າທາຍ ກ່ອນຈະເວົ້າຕື່ມວ່າ:
" ບັກຊ້າງ ຫຍັບເຂົ້າມາໃກ້ໆກູອີກ ກູຍັງຫິວຢູ່.

ແລ້ວ ທ້າວຄັນຄາກກໍພະຍາຍາມເຮັດໃຫ້ຝູງສັດທັງຫລາຍ ແນມເຫັນຂົນຫາງເສືອ ທີ່ຍັງຕິດຢູ່ໃນປາກຂອງມັນ.

- ພະຍາຄັນຄາກ, ທ່ານຄືຜູ້ບັນຊາຂອງພວກເຮົາ, ສຽງດັງກ້ອງອອກມາຈາກປາກຝູງສັດທຸກຕົວ ແບບເປັນສຽງດຽວກັນ.



- Hé! Depuis quand es-tu arrivé ? demanda l'éléphant, étonné, au crapaud.
- Juste le temps d'avaler un tigre, répondit le crapaud avec un sourire narquois, avant d'ajouter:
- Eléphant ! Approche-toi ! J'ai encore faim !

Et le crapaud ne manqua pas de faire en sorte que les poils de la queue du tigre restés dans sa gueule soient bien visibles pour tous.

- Seigneur Crapaud, ce sera toi notre chef ! s'écria la foule d'une voix unanime.

ແລ້ວພະຍາຄັນຄາກ ກໍອອກຄຳສັ່ງໃນທ່ານັກຜະເດັດການວ່າ:

" ນີ້ຄືຄຳສັ່ງຂອງກູ, ພະຍາຄັນຄາກ ນາຍຂອງພວກສູ. ບັດນີ້ ພວກສູຈົ່ງຟັງກູໃຫ້ດີ. ເພື່ອເອົາຊະນະພະຍາແຖນ ຄຳສັ່ງຂອງກູມີດັ່ງນີ້:

" ພວກສູ, ແມງກະເບື້ອ ແລະ ມອດ, ພວກສູຈົ່ງບິນໄປເຫິງຟ້າບ່ອນພະຍາແຖນຢູ່ ແຕ່ດຽວນີ້ໂລດ. ເມື່ອໄປຮອດ ແລ້ວພວກສູຕ້ອງປະຕິບັດງານດັ່ງນີ້ໂລດ. ພວກແມງກະເບື້ອ, ພວກສູຕ້ອງໄຂ່ອອກເປັນຫລາຍລ້ານຫລາຍໂກດໜ່ວຍ ເພື່ອໃຫ້ໄຂ່ຂອງພວກສູແຕກອອກເປັນແມງບົ້ງ ແລ້ວກັດກິນພືດຜັກທຸກຊະນິດທີ່ເປັນອາຫານຂອງທະຫານ ຂອງພະຍາແຖນ ໃຫ້ຮາບກ້ຽງ !
ພວກມອດ ໜ້າທີ່ຂອງພວກສູແມ່ນເຈາະຄັນທອກ, ຄັນດາບ ແລະໜ້າຂອງທະຫານພະຍາແຖນ.



Puis, de sa voix autoritaire, Seigneur Crapaud s'adressa à la foule:

- Maintenant, écoutez-moi vous tous ! C'est moi, Seigneur Crapaud, votre chef qui vous parle. Voici mes directives pour vaincre Phagna Thène :
- Papillons et charançons, envolez-vous immédiatement pour la demeure de Phagna Thène et, dès votre arrivée, attelez-vous immédiatement à la tâche !
- Vous, les papillons, allez faire des chenilles par millions et millions pour dévorer toutes les plantes dont se nourrissent les soldats de Phagna Thène.
- Vous, les charançons, allez ronger les arbalètes, et les manches de lances et de sabres des soldats de Phagna Thène.

- ມຶງບັກຊ້າງ ມຶງມີຫນ້າທີ່ໃຫ້ກູຂີ່.
- ມຶງບັກເສືອ, ມຶງເປັນປ້ອງກັນ ໃກ້ຊິດກູ.
- ມຶງບັກລີງ, ມຶງຕ້ອງກຽມພ້ອມທຸກເວລາເມື່ອກູສັ່ງ, ມຶງຕ້ອງກືດົ້ນໄຟເຕັ້ນຂຶ້ນຫລັງຄາ ໂຮງພະຍາແຖນໂລດ.
- ຄຳສັ່ງສຸດທ້າຍສຳລັບທັງຫມົດຄືແບບນີ້: ພວກສູຕ້ອງປະຕິບັດຄຳສັ່ງຂອງກູ ຢ່າງເອົາຈິງເອົາຈັງ.
  ບໍ່ດັ່ງນັ້ນ ພວກສູ ກໍຮູ້ດີຢູ່ແລ້ວວ່າກູຫິວຕະຫລອດເວລາ.



- Eléphant, tu seras mon porteur.
- Tigre, tu seras mon garde du corps.
- Singe, tiens toi prêt. A mon signal tu sauteras sur le toit de la demeure de Phagna Thène, avec une bûche enflammée dans la main.
- Dernière consigne, respectez scrupuleusement mes ordres, sinon...vous connaissez mon grand appétit !

ແລ້ວຝູງສັດທັງຫລາຍກໍປະຕິບັດຄຳສັ່ງຂອງພະຍາຄັນຄາກ ຕະຫລອດໄລຍະເດີນທາງ.



Et tous respectèrent la consigne tout le long voyage.

ໃນທີ່ສຸດ ມື້ທີ່ຈະເຫັນແດງເຫັນດຳກັນ ກໍມາເຖິງ. ພະຍາຄັນຄາກ ໃນຊຸດຜ້າແດງພັນຄໍ ງອຍຢູ່ເທິງຄໍຊ້າງ ດ້ວຍທ່າທີເຄັ່ງຂຶມ, ຢູ່ຕໍ່ຫນ້າລະບຽງຂອງໂຮງ ພະຍາແຖນ. ທາງຝ່າຍພະຍາແຖນ ຮູ້ສຶກຈົນຕາແຈຮອບດ້ານ. ທະຫານ ກໍຈ່ອຍຜອມ ຫນັງຕິດກະດູກ, ຕາໂກນໂກກໂອກ. ອາວຸດ ຍຸດໂທປະກອນກໍຫັກມຸ່ນມິນຫມົດ.



Enfin arriva le jour fatidique. Seigneur Crapaud, trônant sur le dos de l'éléphant, un foulard rouge noué autour du cou, arborant un air menaçant, se tint devant la véranda de la demeure de Phagna Thène. Celui-ci se sentait déjà dos au mur, ses soldats affamés, tenant à peine debout, leurs armes tombant en miettes.

ພະຍາແຖນ ຈຶ່ງບໍ່ກ້າເງີຍໜ້າຂຶ້ນຕອບໂຕ້ ພະຍາຄັນຄາກໄດ້. ທາງອອກຍັງເຫລືອແຕ່ທາງດຽວຄື: ຍອມຈຳນົນ.
" ຈົ່ງທານໂທດທານຊີວິດ ແກ່ຂ້າພະບາດແດ່ທ້ອນ. ທ່ານເກັ່ງກ້າເຫລືອລົ້ນລື່ນປະມານ. ຂ້າພະບາດຂໍຍອມຈຳນົນ. ຂ້າພະບາດຂໍປະຕິບັດທຸກຄຳສັ່ງຂອງທ່ານ. ຂ້າພະບາດມີລິດເກັ່ງກ້າສາມາດ ສ້າງສິ່ງມະຫັດສະຈັນໄດ້ຫລາຍສິ່ງຫລາຍແນວ. ຂໍພຽງແຕ່ຂ້າພະບາດມີຊີວິດຢູ່ ທ່ານຢາກໄດ້ຫຍັງສັ່ງຂ້າພະບາດໂລດ" ພະຍາແຖນໄຫວ້ວອນ ທັງສັ່ນທັງເສັ່ນ.



Il ne fit donc pas montre d'un grand courage et n'eut pas d'autre choix que de capituler.

- De grâce, épargnez-moi la vie ! Vous êtes les plus forts. Je capitule, je me résigne à exécuter tous vos ordres et je mettrai mes nombreux pouvoirs magiques à votre service. Dites-moi ce que vous voulez de moi ! implora Phagna Thène, tremblant.

- ມຶງຈົ່ງປະດິດກ້ວຍ ແລະຫມາກເດື່ອມາໃຫ້ກູ ຫລາຍໆ. ຫລາຍເທົ່າໃດແຮງດີ, ທ້າວລິງສັ່ງ.
- ມຶງຈົ່ງສັ່ງໃຫ້ຕົ້ນກ້ວຍ ແລະຕົ້ນອ້ອຍເກີດ ຂຶ້ນເຕັມຫມົດແຜ່ນດິນ, ທ້າວຊ້າງແຜດຂຶ້ນ.







- Je veux des tas de bananes et des tas de figues, ordonna le singe.
- Fais pousser beaucoup de canne- à-sucre et de bananiers, cria l'éléphant.

- ອະແຮມ ! ທ້າວຄັນຄາກສະຫມາດຄໍ ກ່ອນຈະເປັ່ງສຽງຂຶ້ນວ່າ:
- ພວກສູທັງສອງຫັ້ນ, ໃຜອະນຸຍາດ ໃຫ້ພວກສູສັ່ງ ? ບະ !
ກູໂລດຮູ້ສຶກທ້ອງຫວ່າງອອກບາດດຽວໂລດແມ້ !
ທ້າວຄັນຄາກ ຮ້ອງແຜດຂຶ້ນ

- ແມ່ນແລ້ວຫົວຫນ້າ ! ມີແຕ່ຫົວຫນ້າຜູ້ດຽວທີ່ມີສິດສັ່ງ,
ທ້າວເສືອອ້ອນວອນ ເກືອບສຽງບໍ່ພົ້ນຮິມສົບ.
ແລ້ວພະຍາຄັນຄາກ ກໍປິ່ນຫນ້າໄປໃສ່ພະຍາແຖນ
ກ່ອນຈະເປັ່ງສຽງຂຶ້ນວ່າ:

- ກູສັ່ງໃຫ້ມຶງເຮັດຝົນຕົກລົງທົ່ວແຜ່ນດິນດຽວນີ້. ກູສັ່ງໃຫ້ມຶງ
ປະດິດພືດພັນພິເສດ ທີ່ສາມາດໃຫ້ຄົນອີ່ມຫນຳສຳລານຢູ່ທົ່ວ
ແຜ່ນດິນ.



Hum ! Seigneur Crapaud fait semblant de tousser avant de s' exclamer :

- Vous deux ! qui vous a donné la parole ? Vous me donnez faim tout à coup !
- Seigneur, la parole est à toi ! supplia le tigre d'une voix à peine perceptible.
- Je t'ordonne de faire immédiatement la pluie sur Terre et d'y faire pousser une plante prodigieuse capable de bien nourrir nos amis les hommes, ordonna Seigneur Crapaud à Phagna Thène.

- ສໍາລັບຝົນນັ້ນປະຕິບັດແລ້ວ. ດຽວນີ້ຝົນກໍາລັງຫົດແຜ່ນດິນຢູ່. ສໍາລັບພືດນັ້ນ ຂະນ້ອຍຈະປະດິດພືດຊະນິດຫນຶ່ງທີ່ເກີດຂຶ້ນແບບຕີນຈຸ່ມນໍ້າ. ມັນໃຫ້ຫມາກເປັນເມັດທີ່ຈັບຢູ່ຕາມຮວງ, ແຕ່ລະຮວງມີຫລາຍຮ້ອຍເມັດ.
ເມັດພືດຊະນິດນີ້ ກິນກໍແຊບ ທາດບໍາລຸງກໍຫລາຍ. ກືວ່າເປັນອາຫານຍອດຍິ່ງສໍາລັບຄົນ ແຕ່ຂ້າພະບາດ ບໍ່ທັນຮູ້ວ່າທ່ານຢາກໃຫ້ເມັດມັນໃຫຍ່ສໍ່າໃດ ? ຮວງມັນເດ ຢາກໄດ້ຍາວປານໃດ?

ພະຍາແຖນຕອບດ້ວຍຄວາມອຸ່ນອຽນຂຶ້ນມາເລັກນ້ອຍ.



- Pour la pluie, c’est chose faite. En ce qui concerne la plante, j’en inventerai une qui poussera les pieds dans l’eau et qui donnera dans un épi des centaines de grains, aussi appétissants que nourrissants. Mais dites-moi quelle grosseur de grain et quelle longueur d’épi désirez-vous? répondit Phagha Thène, un peu rassuré.

- ເມັດໃຫຍ່ສ່ຳຫົວກູນີ້ !
ແລະຮວງຍາວສ່ຳຫາງກູນີ້ !
ທ້າວລິງຟ້າວຕອບ.
- ເມັດສ່ຳຕາກູນີ້ ແລະຮວງຍາວສ່ຳ ງວງກູນີ້ !
ທ້າວຊ້າງ ຍາດຕອບ.



- Un grain gros comme ma tête et un épi long comme ma queue ! répondit immédiatement le singe.
- Un grain gros comme mon oeil et un épi long comme ma trompe, dit l'éléphant, presque en même temps que le singe.

- ບັກລິງ ! ບັກຄ້າງຢ້າງ ໃຜໃຫ້ມຶງອ້າງກ່ອນກູ ? ພະຍາຄັນຄາກບາບໃສ່ທ້າວລິງ
- ບັກຊ້າງບັກເຄົ້າເມົ້າ ໃຜໃຫ້ມຶງເວົ້າກ່ອນກູ ຕາມຶງນ້ອຍເອົາແທ້ເອົາວ່າ, ນ້ອຍຈົນບໍ່ເຫັນຮອດກູ, ກູນັ່ງຢູ່ຄໍມຶງເທີ້ເລີ້ຢູ່ມຶງກໍບໍ່ເຫັນ, ພະຍາຄັນຄາກຄາງໃສ່ຊ້າງ ພ້ອມທັງເປັນການບອກໃຫ້ຝູງສັດທັງຫລາຍ ຮູ້ຖານະຂອງໃຜລາວ.
- ແມ່ນແລ້ວຫົວໜ້າ ! ມີແຕ່ຫົວໜ້າຜູ້ດຽວທີ່ມີສິດອອກຄວາມເຫັນ, ທ້າວເສືອຟ້າວທວນຄວາມຊ່ອຍຈໍາ.
ແລ້ວພະຍາຄັນຄາກ ກໍອອກຄໍາສັ່ງຢ່າງສະຫງ່າຜ່າເຜີຍ:
- ເມັດໃຫຍ່ສໍ່າບົ້ວໂປ້ອົງພະຍາຄັນຄາກກູນີ້.   ຮວງຍາວສໍ່າສາມວາແຂ້ງນອົງພະຍາຄັນຄາກກູນີ້ !
ພະຍາຄັນຄາກບົ່ງການ !



- Hé, singe ! qui t'autorise à faire des grimaces ?
- Et toi éléphant, tes yeux sont tellement minuscules que tu ne vois même pas que je suis sur ton cou ! gronda Seigneur Crapaud.
- Naturellement Seigneur, tu es le seul à avoir la parole ! se hâta de rappeler le tigre.

  Et avec un air de satisfaction, maître Crapaud ordonna:
- Un grain gros comme mon pouce et un épi long comme trois fois mes deux bras.

ແລ້ວແມ່ຕູ້ຂອງຂ້ອຍ ກໍຕື່ມວ່າ :

" ເປັນຈັ່ງຊັ້ນແລ້ວ ຫລານເອີຍ ເມັດເຂົ້າຈຶ່ງນ້ອຍ ແລະຮວງເຂົ້າຈຶ່ງສັ້ນ ".



Et ma grand'mère ajouta:

- C'est pour cela que les grains de riz sont si petits et les épis sont si courts !

ຕະຫລອດໄວເດັກຂອງຂ້ອຍ, ເມື່ອໃດຂ້ອຍຄຶດເຖິງນິທານເລື່ອງນີ້ ຂ້ອຍຫລົງຈົ່ມຜູ່ດຽວວ່າ :

" ຖ້າວ່າຄຳສະເຫນີຂອງລີງ  ຫລື ຊ້າງຫາກຖືກຍອມຮັບ, ມວນມະນຸດຄືຊິມີແຕ່ຄວາມຜາສຸກ ".



Durant toute mon enfance, en repensant à ce conte, je me suis maintes fois dit:
“ si les propositions du singe ou celles de l’éléphant avaient été acceptées, les êtres humains ne pourraient qu’en être très heureux”.

ໃນທຸກວັນນີ້ ເຖິງວ່າຫລາຍປີຈະຜ່ານໄປແລ້ວ ກໍຕາມ ແຕ່ຂ້ອຍກໍຍັງຕັ້ງຄຳຖາມກັບຕົນເອງ ເລື້ອຍໆວ່າ:

" ບາງຄັ້ງບາງຄາວ ເຫດຜົນຂອງຜູ່ທີ່ມີພະລັງກ້າກວ່າເພິ່ນທັງປວງ ກໍສາມາດນຳມາ
ຕັ້ງເປັນກະທູ້ສົນທະນາ   ກັນໄດ້ຢູ່ບໍ ? "



Et, de nos jours, bien des années plus tard, je me pose toujours la question:

*"La raison du plus fort est-elle, parfois, discutable ?"*

# ບໍລິສັດ ຜະລິດຕະພັນ ກະສິກອນລາວ ຈຳກັດ
# Lao Farmers' Products




ໍ໑໕໘ ຖະໜົນມິດຕະພາບ ລາວ-ໄທ ຕູ້ ປນ ໓໓໐, ວຽງຈັນ ສປປ ລາວ
158, Rue Mittaphab Lao-Thai,BP. 330 Vientiane, Laos
Tel: (856-21) 313976 Fax: (856-21-) 314425 Email: lfps@laotel.com www.lao-farmers.com

# *ຕົ້ນກຳເນີດຂອງເຂົ້າ*
*ຕາມທີ່ແມ່ຕູ້ຂ້ອຍເລົ່າສູ່ຂ້ອຍຟັງ*

ເຈົ້າຂອງເລື່ອງ ສີສະຫລຽວ ສະແຫວງສຶກສາ
ຮູບປະກອບໂດຍ ວົງສະຫວັນ ດຳລົງສຸກ , ດີມກາ **ສຸດທະວົງ**
ຈັດໜ້າ ອອກແບບປົກ: ບໍລິສັດ ດອກເກດ ຈັດພິມ ຈຳກັດ
ທະບຽນພິມ: 707 ກວ/ນວ
ຈຳນວນ: 2000 ຫົວ
ພິມທີ່: ໂຮງພິມມັນທາຕຸຣາດ
ຈັດພິມໂດຍ: ສສພສຊ, ສະມາຄົມສົ່ງເສີມການພັດທະນາສັງຄົມຊາວຊົນນະບົດ
ແລະ ສູນວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດແຫ່ງປະເທດຝຣັ່ງ ປະຈຳ ສປປລາວ
ອຸປະກຳການພິມໂດຍ:
- ສູນວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດ ແຫ່ງປະເທດຝຣັ່ງປະຈຳ ສປປລາວ.
- ໂຊລິດາມົງດ໌ (ສູນເກັບຊື້ສິນຄ້າ ທີ່ເປັນທຳ) ປະເທດຝຣັ່ງ
- ຜະລິດຕະພັນກະສິກອນລາວ (ບໍລິສັດສະຫະກອນເພື່ອການຄ້າທີ່ເປັນທຳ), ສປປລາວ.
- ສະມາຄົມລາວເພື່ອການຄ້າທີ່ເປັນທຳ, ປະເທດຝຣັ່ງ.
- ສະມາຄົມສົ່ງເສີມ ມສ ວຽງຈັນ, ປະເທດຝຣັ່ງ.
- ສະມາຄົມແມ່ຍິງລາວເພື່ອການແລກປ່ຽນ ແລະການພັດທະນາ, ປະເທດຝຣັ່ງ.
- ອົງການຮ່ວມມືກັບປະເທດລາວ ຂອງປະເທດຝຣັ່ງ.

*© ສະຫງວນລິຂະສິດ ໂດຍ ສີສະຫລຽວ ສະແຫວງສຶກສາ*
*ຫ້າມນຳເນື້ອໃນ ແລະຮູບ ໃນປຶ້ມຫົວນີ້ ໄປໃຊ້ໂດຍບໍ່ໄດ້ຮັບອະນຸຍາດ.*

## L'origine du riz
telle qu'elle me fut contée par ma grand'mère

Auteur: Sisaliao Svèngsuksa
Illustration: Vongsavanh Damlongsouk et Dimka Southavong
Mise en page: Dokked Publishing Co., Ltd
No d'enregistrement: *707/ ກວ.ນວ*
Imprimerie: Manthaturath Printing House, Vientiane la Capitale
Editeurs: - ASDSP, Association de Soutien au Développement des Sociétés Paysannes
- Centre de Culturel et de Coopération Linguistique de la France en RDP Lao.

Prise en charge des frais de publication par:

- Le Centre Culturel et de Coopération Linguistique de la France en RDP Lao (Centre de langue française)
- Solidar'Monde (Centrale d'Achat de Produits Equitables), France
- Lao Farmers'Products - LFP (Société Coopérative du Commerce Equitable Lao), Laos
- L'Association Lao Commerce Equitable - LCE, France
- L'Association de soutien au Lycée de Vientiane - ASLV, France
- L'Association Femmes Lao, Echanges et Développement, France
- Comité de Coopération avec le Laos - CCL, France

© Droits réservés, Première Edition: 2000 exemplaires

ສສພສຊ, ສະມາຄົມສົ່ງເສີມການພັດທະນາສັງຄົມຊາວຊົນນະບົດ

ຂໍມອບນິທານປະກອບຮູບເລື່ອງນີ້ ໃຫ້ແກ່ :

# ປີສາກົນ ແຫ່ງ ເຂົ້າ (2004)

ປະກາດໂດຍອົງການສະຫະປະຊາຊາດ

ແລະ ສະແດງຄວາມຮູ້ບຸນຄຸນມາຍັງ :

- ສູນວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດ ຂອງປະເທດຝຣັ່ງປະຈຳ ສປປ ລາວ.
- ໂຊລິດາມົງດ໌ (ສູນເກັບຊື້ສິນຄ້າ ທີ່ເປັນທຳ) ປະເທດຝຣັ່ງ.
- ຜະຫລິດຕະພັນກະສິກອນລາວ (ບໍລິສັດສະຫະກອນເພື່ອການຄ້າທີ່ເປັນທຳ), ສປປລາວ.
- ສະມາຄົມລາວເພື່ອການຄ້າທີ່ເປັນທຳ, ປະເທດຝຣັ່ງ.
- ສະມາຄົມສົ່ງເສີມ ມສ ວຽງຈັນ, ປະເທດຝຣັ່ງ.
- ສະມາຄົມແມ່ຍິງລາວເພື່ອການແລກປ່ຽນ ແລະ ການພັດທະນາ, ປະເທດຝຣັ່ງ.
- ອົງການຮ່ວມມືກັບປະເທດລາວ ຂອງປະເທດຝຣັ່ງ.

ທີ່ໄດ້ ອຸປະກຳການຈັດພິມ.

L'ASDSP, Association de Soutien au Développement des Sociétés Paysannes,
dédie ce conte illustré à :

# L'ANNEE INTERNATIONALE DU RIZ (2004)

proclamée par l'ONU

et présente sa gratitude à :

- Le Centre de langue française (CCCL) en RDP Lao
- Solidar'Monde (Centrale d'Achat de produits Equitables), France
- Lao Farmers'Products - LFP (Société Coopérative du Commerce Equitable Lao), Laos.
- L'Association Lao Commerce Equitable - LCE, France
- L'Association de soutien au Lycée de Vientiane - ASLV, France
- L'Association Femmes Lao, Echanges et Développement, France
- Comité de Coopération avec le Laos - CCL, France

qui ont pris en charge les frais de publication.